# ໂຮງຮຽນວັນອາທິດ

**ວັນອາທິດ ທີ 19 ກໍຣະກົດ 2020 (07-19-2020)**

---

## ຂ້າພະເຈົ້າຄວນຕອບສນອງແນວໃດຕໍ່ການເມືອງ.

ທ່ານຈື່ຫັຍງໄດ້ແດ່ກ່ຽວກັບປະສົບການການເລືອກຕັ້ງຄັ້ງແລກຂອງທ່ານ?

**ຈຸດສຳຄັນໃນບົດຮຽນ**: ຈົ່ງສະທ້ອນໃຫ້ເຫັນພຣະຄຣິດໃນວິທີທີ່ທ່ານພົວພັນກັບການເມືອງແລະຣັຖບານ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ການເມືອງສາມາດເປັນທົ່ງຝັງລະເບີດແທ້ຈິງ- ໂດຍສະເພາະສຳລັບຊາວຄຣິສຕຽນ. ຂ້າພະເຈົ້າໄດ້ຮຽນຮູ້ສິ່ງນີ້ເມື່ອຂ້າພະເຈົ້າຮັບໃຊ້ຢູ່ໃນຄະນະໂຮງຮຽນທ້ອງຖິ່ນຂອງຂ້າພະເຈົ້າ. ໃນຂນະທີ່ພວກນັກການເມືອງມີຄວາມເປັນຫ່ວງກັບຜົນປໂຍດທີ່ໄດ້ຮັບແຕ່ພຽງເທົ່ານັ້ນ, ຊາວຄຣິສຕຽນກໍຕ້ອງໄດ້ມີຄວາມເປັນຫ່ວງກັບຂັ້ນຕອນນີ້ດ້ວຍ. ໃນຊ່ວງເວລາທີ່ມີການໂຕ້ຖຽງກັບເພື່ອນຮ່ວມງານຂອງຂ້າພະເຈົ້າທີ່ຢາກບັນລຸເປົ້າໝາຍນັ້ນທີ່ອາດມີຜົນດີ, ແຕ່ພວກເຂົາຢາກໄດ້ຮັບຄວາມສຳເຣັດນັ້ນໂດຍວິທີລະເມີດຕໍ່ຫຼັກການຂອງຄຣິສຕຽນ. ຂ້າພະເຈົ້າບໍ່ສາມາດໃຫ້ການສນັບສນູນບາງຢ່າງທີ່ດີໄດ້ຖ້າຫາກວ່າຂ້າພະເຈົ້າຕ້ອງເຫັນພ້ອມໃນທາງຕໍ່ສູ້ເຣື່ອງທີ່ກ່ຽວກັບພຣະຄັມພີ.

ປໂຍກທີ່ວ່າ "ສົນໃຈກັບຜົນທີ່ຕ້ອງການ," ມັນມີສ່ວນກ່ຽວຂ້ອງກັບນັກປຣັຊຍາ ມາກກີອາເວີລີໃນສະຕະວັດທີ 16. ລາວໄດ້ຂຽນໃນຜົນງານສິ້ນນຶ່ງຂອງລາວ. "ເຖິງແມ່ນວ່າການກະທຳດັ່ງກ່າວຈະລົງໂທດຜູ້ກະທຳກໍຕາມ, ສຸດທ້າຍລາວອາດພໍໃຈໃນຜົນກະທຳນັ້ນ." ມາກກີອາເວີລີເບິ່ງຄືວ່າລາວເຊື່ອແນວນັ້ນ, ຖ້າເປົ້າໝາຍຂອງພວກເຮົາດີ, ຫຼັງຈາກນັ້ນພວກເຮົາກໍມີອິສຣະທີ່ຈະໃຊ້ວິທີໃດກໍໄດ້ທີ່ຈຳເປັນຕ້ອງທຳເພື່ອບັນລຸເປົ້າໝາຍ, ແຕ່ໜ້າເສັຽດາຍ, ຄຣິສຕຽນໃນທຸກມື້ນີ້ເບິ່ງຄືວ່າຈະເຂົ້າໃນແນວຄິດແນວນັ້ນ, ແຕ່ທ່ານຈະບໍ່ພົບແນວຄິດແນວນັ້ນໃນພຣະຄັມພີ. ໃນຄວາມເປັນຈິງ, ພຣະເຈົ້າເອີ້ນພວກເຮົາສູ່ມາດຕະຖານທີ່ແຕກຕ່າງກັນຢ່າງສິ້ນເຊີງ; ມາດຕະຖານຂອງການເຊື່ອຟັງແລະຄວາມຮັກເຊິ່ງຈະເຫັນໄດ້ໃນວິທີທີ່ພວກເຮົາຕອບສນອງຕໍ່ການເມືອງແລະຣັຖບານ.

**ພຣະຄຳພີກ່າວວ່າຢ່າງໃດ?** ( ເບິ່ງຕາມຫົວຂໍ້ 1, 2, ແລະ 3, )

**<u>ສຶກສາພຣະຄັມພີ</u>**

## 1. ໂຣມ 13:1-4

1. ທຸກຄົນຈົ່ງຍອມຢູ່ໃຕ້ບັງຄັບຜູ້ມີອຳນາດປົກຄອງ ດ້ວຍວ່າບໍ່ມີອຳນາດອັນໃດທີ່ບໍ່ໄດ້ມາຈາກພຣະເຈົ້າ ແລະຜູ້ທີ່ມີ
ອຳນາດນັ້ນກໍແມ່ນພຣະເຈົ້າຊົງແຕ່ງຕັ້ງຂຶ້ນ. *2.* ເຫດສັນນັ້ນຜູ້ທີ່ຂັດຂືນອຳນາດນັ້ນ ກໍຂັດຂືນຜູ້ຊຶ່ງພຣະເຈົ້າຊົງແຕ່ງ
ຕັ້ງຂຶ້ນ ແລະຜູ້ທີ່ຂັດຂືນນັ້ນຈະຕ້ອງຖືກພິພາກສາລົງໂທດ. *3.* ເພາະວ່າຜູ້ປົກຄອງນັ້ນບໍ່ເປັນໜ້າຢ້ານສຳລັບຄົນທີ່
ເຮັດການດີ ແຕ່ເປັນໜ້າຢ້ານສຳລັບຄົນທີ່ເຮັດການຊົ່ວ ເຈົ້າບໍ່ຢາກຢ້ານຜູ້ມີອຳນາດຫຼື ຖ້າດັ່ງນັ້ນຈົ່ງເຮັດແຕ່ການດີ
ແລ້ວເຈົ້າກໍຈະໄດ້ເປັນທີ່ພໍໃຈຂອງຜູ້ມີອຳນາດນັ້ນ. *4.* ເພາະວ່າຜູ້ປົກຄອງນັ້ນເປັນຜູ້ຮັບໃຊ້ຂອງພຣະເຈົ້າເພື່ອໃຫ້
ປໂຍດແກ່ເຈົ້າ ແຕ່ ວ່າຖ້າເຈົ້າເຮັດການຊົ່ວຈົ່ງຢ້ານ ເພາະວ່າຜູ້ປົກຄອງນັ້ນບໍ່ໄດ້ຖືດາບໄວ້ຊື່ໆ ທ່ານເປັນຜູ້ຮັບໃຊ້
ຂອງພຣະເຈົ້າ ເປັນຜູ້ໃຊ້ຄວາມຮ້າຍຂາດແທນພຣະເຈົ້າແກ່ທຸກຄົນທີ່ເຮັດການຊົ່ວ.

ຖ້າທ່ານຈິນຕະນາການວ່າຊີວິດໃນຈັກກະພັດໂຣມັນແມ່ນຂ້ອນຂ້າງມີຄວາມສງົບສຸກ, ສນຸກສນານ, ຈະເຣີນຮຸ່ງເຮືອງ, ແລະອຸດົມສົມບູນຂຶ້ນໄປເລື້ອຍ, ຈົ່ງຄິດເບິ່ງໃໝ່, ຄວາມຈິງກໍຄືວ່າການເປັນຂ້າທາດ, ການຂູດຮີດທາງເພດ, ຄວາມຮຸນແຮງ, ຄວາມໂຫດຮ້າຍ, ການກິນສິນບົນ, ແລະການສໍ້ລາດບັງຫຼວງແມ່ນມີຢູ່ທົ່ວໄປໃນສະຕະວັດທຳອິດ.

ມັນແມ່ນຢູ່ໃນທ່າມກາງສິ່ງທັງໝົດນີ້ທີ່ໂປໂລໄດ້ຂຽນເຖິງການຕັກເຕືອນຜູ້ທີ່ເຊື່ອຊາວໂຣມັນ: " ໃຫ້ທຸກຄົນຍອມຢູ່ໃຕ້ອຳນາດການປົກຄອງ"( ຂໍ້ 1).

ຊ່ວງປີ 1990. ປະໂຍກດັ່ງກ່າວແມ່ນການເຕືອນທຸກໆສັງຄົມວ່າຈະຕ້ອງມີບາງແບບແຜນການປົກຄອງທີ່ນຳພາປະຊາຊົນແລະການດຳເນີນງານຕ່າງໆເພື່ອໃຫ້ພວກເຮົາມີຊີວິດຢູ່ໃນຄວາມສງົບສຸກ. ເຖິງແມ່ນວ່າແນວຄວາມຄິດລະບຽບຂອງກົດໝາຍບໍ່ໄດ້ຖືກປະກາດໃຊ້ໃນປີ 1990, ແຕ່ຢ່າງໜ້ອຍກໍຍັງຄືເກົ່າກັບຂໍ້ຄວາມເກົ່າແກ່ນີ້.

ທ່ານໄດ້ເຫັນພວກຣັຖບານເປັນຜົນປໂຍດແນວໃດຕໍ່ທ່ານແລະຄຸ້ມເຂດຂອງທ່ານ?

ສິ່ງນຶ່ງທີ່ພວກເຮົາຮູ້ຈັກກ່ຽວກັບພຣະເຈົ້າກໍຄືວ່າພຣະອົງເປັນພຣະເຈົ້າທີ່ມີລະບຽບ, ແລະຄວາມເປັນລະບຽບຮຽບຮ້ອຍນັ້ນກໍຮ່ວມກັນຢູ່ພາຍໃຕ້ອຳນາດຂອງພຣະອົງ. ພຽງແຕ່ຄິດກ່ຽວກັບການຊົງສ້າງໂລກຂອງພຣະອົງ. ໂລກໂຄຈອນອ້ອມດວງອາທິດຈາກລະຍະຫ່າງສະເລັ່ງ 92.96 ລ້ານໄມແລະມັນໂຄຈອນອ້ອມຮອບດວງອາທິດໃນທຸກໆ 365.256 ວັນ. ຖ້າແຜ່ນດິນໂລກໃກ້ກັບດວງອາທິດພຽງເລັກນ້ອຍ, ມັນຈະຮ້ອນເກີນໄປທີ່ຈະຮັກສາຊີວິດ, ແລະຖ້າຢູ່ຫ່າງເລັກນ້ອຍ, ມັນກໍ່ຈະໜາວເຢັນເກີນໄປ, ພຣະເຈົ້າໄດ້ສັ່ງໃຫ້ສິ່ງຕ່າງໆຢູ່ໃນລະບົບທີ່ຖືກຕ້ອງ.

ໂປໂລໄດ້ບອກກັບຄຣິສຈັກເມືອງໂກຣິນໂທ: "ເພາະວ່າພຣະເຈົ້າບໍ່ໃຊ່ເປັນຜູ້ກໍ່ເຫດຫວຸ້ນວາຍແຕ່ຊົງໃຫ້ເກີດຄວາມສງົບ" (1 ກຣທ 14:33). ຄວາມສງົບຂອງພຣະເຈົ້າແມ່ນໃຊ້ໃນເວລາທີ່ກ່ຽວຂ້ອງກັບຣັຖບານເໝືອນກັນ, ເພາະວ່າພຣະເຈົ້າຕັ້ງຣັຖບານໃຫ້ຮັກສາຄວາມເປັນລະບຽບຮຽບຮ້ອຍ. ຂນະທີ່ພວກເຮົາດຳເນີນຊີວິດຢູ່ໃນການຍອມຢູ່ໃຕ້ການປົກຄອງຂອງຣັຖບານ, ພວກເຮົາໄດ້ຮຽນຮູ້ວ່າມັນມີຄວາມໝາຍຢ່າງໃດທີ່ຈະດຳເນີນຊີວິດຢູ່ໃນການຍິນຍອມຢູ່ໃຕ້ອຳນາດຂອງພຣະເຈົ້າ. "ດັ່ງນັ້ນ, ຜູ້ທີ່ກະບົດຕໍ່ສູ້ຕໍ່ອຳນາດການປົກຄອງກໍແມ່ນຄັດຄ້ານຕໍ່ຄຳສັ່ງຂອງພຣະເຈົ້າ" (ຂໍ້20). ໜ້າເສັຽດາຍ, ຣັຖບານແມ່ນໄດ້ຄວບຄຸມໂດຍກຸ່ມຄົນທີ່ບໍ່ສົມບູນແບບ. ຄົນທີ່ບໍ່ສົມບູນແບບຈະເຮັດໃນສິ່ງທີ່ບໍ່ສົມບູນແບບ. ບາງຄັ້ງ, ສິ່ງທີ່ບໍ່ສົມບູນແບບເຫຼົ່ານີ້ກໍຈະຂັດກັບພຣະປະສົງຂອງພຣະເຈົ້າ.

ສິ່ງທີ່ທ້າທາຍເຫຼົ້ານີ້ໄດ້ປະເຊີນໜ້າກັບພວກອັຄສາວົກ. ພວກອຳນາດການປົກຄອງຈັບກຸ່ມເຫຼົ່າອັຄສາວົກແລະສັ່ງບໍ່ໃຫ້ພວກເຂົາເຈົ້າປະກາດພຣະນາມພຣະເຢຊູ (ກິຈການ 5:18-28), ແຕ່ພວກອັຄສາວົກໄດ້ບອກກັບພວກຜູ້ປົກຄອງວ່າ: ພວກເຮົາຈຳເປັນຕ້ອງເຊື່ອຟັງພຣະເຈົ້າຫຼາຍກວ່າເຊື່ອຟັງມະນຸດ" (ຂໍ້ 29). ແຕ່ສິ່ງນີ້ບໍ່ແມ່ນຊ່ອງວ່າງທີ່ຊ່ວຍໃຫ້ພວກເຮົາບໍ່ເຊື່ອຟັງອຳນາດການປົກຄອງເມື່ອໃດກໍຕາມທີ່ເຂົາພ້ອງຮ້ອງພວກເຮົາ. ຕົວຢ່າງຂອງພວກອັຄສາວົກແມ່ນເຕືອນພວກເຮົາວ່າຕ້ອງດຳເນີນຊີວິດຢູ່ດ້ວຍການເຊື່ອຟັງຣັຖບານນັ້ນຈົນກວ່າວ່າການເຊື່ອຟັງນັ້ນບໍ່ໄດ້ເຮັດໃຫ້ເຮົາເຮັດຜິດຕໍ່ພຣະປະສົງຂອງພຣະເຈົ້າ.

## 2. ໂຣມ 13:5-7

*5.* ເຫດສັນນັ້ນເຈົ້າຈະຕ້ອງຢູ່ໃຕ້ບັງຄັບບັນຊາບໍ່ໃຊ່ເພາະເຫັນແກ່ຄວາມຮ້າຍຂາດແຕ່ສິ່ງດຽວແຕ່ເພາະໃຈສຳນຶກຜິດແລະຊອບດ້ວຍ. *6.* ເພາະເຫດຜົນຢ່າງດຽວກັນນັ້ນເຈົ້າຈຶ່ງໄດ້ເສັຽສ່ວຍສາອາກອນ ດ້ວຍວ່າຜູ້ມີອຳນາດນັ້ນເປັນຜູ້ຮັບໃຊ້ຂອງພຣະເຈົ້າແລະປະຕິບັດໜ້າທີ່ນີ້ຢູ່. *7.* ເຈົ້າຈົ່ງໃຫ້ແກ່ທຸກຄົນຕາມທີ່ເຂົາຄວນຈະໄດ້ຮັບສ່ວຍສາອາກອນຄວນໃຫ້ຜູ້ໃດຈົ່ງໃຫ້ແກ່ຜູ້ນັ້ນພາສີຄວນເສັຽໃຫ້ຜູ້ໃດຈົ່ງໃຫ້ແກ່ຜູ້ນັ້ນຄວາມຢຳເກງຄວນໃຫ້ແກ່ຜູ້ໃດຈົ່ງໃຫ້ແກ່ຜູ້ນັ້ນກຽດຕິຍົດຄວນມີແກ່ຜູ້ໃດຈົ່ງໃຫ້ແກ່ຜູ້ນັ້ນ.

ຄຳພະຍານຂອງພວກເຮົາສະແດງໃຫ້ເຫັນຢູ່ທົ່ວທຸກແຫ່ງ, ໃຫ້ຫຼາຍເທົ່າທີ່ຈະເປັນໄປໄດ້, ຄຣິສຕຽນຄວນເປັນແບບຢ່າງພົລເມືອງດີ. ພວກເຮົາໄດ້ຖືກສອນໃຫ້ "ຍອມຢູ່ກ້ອງອຳນາດ, ບໍ່ພຽງແຕ່ຍ້ອນຄວາມໂມໂຫເທົ່ານັ້ນແຕ່ຍ້ອນຄວາມສຳນຶກຜິດແລະຊອບຂອງທ່ານ (ຂໍ້ 5).

ໃນຄຳເທສນາຂອງພຣະອົງທີ່ເທິງພູເຂົາ, ພຣະເຢຊູໄດ້ເພີ່ມສ່ວນປະກອບທີ່ສຳຄັນສຳລັບການເຊື່ອຟັງຂອງພວກເຮົາ: "ຖ້າຜູ້ໃດຈະເກນທ່ານໃຫ້ຍ່າງໄປນຶ່ງຫຼັກກໍໃຫ້ທ່ານໄປກັບເພິ່ນເຖິງສອງຫຼັກ" (ມັດທາຍ 5:41). ພຣະເຢຊູຍັງກ່າວອີກວ່າ: "ສິ່ງທີ່ເປັນຂອງກາຍຊາຈົ່ງຄືນຖວາຍແກ່ກາຍຊາແລະສິ່ງທີ່ເປັນຂອງພຣະເຈົ້າຈົ່ງຄືນຖວາຍແກ່ພຣະເຈົ້າ" (ມັດທາຍ 22:21). ມີຫຼາຍໆສິ່ງທີ່ອາດເປັນຂອງອຳນາດການປົກຄອງ, ແຕ່ວ່າທຸກໆສິ່ງເປັນຂອງພຣະເຈົ້າຮ່ວມໄປເຖິງອຳນາດການປົກຄອງ. "ຜູ້ມີອຳນາດນັ້ນເປັນຜູ້ຮັບໃຊ້ພຣະເຈົ້າ (ຂໍ້ 6). ການເຊື່ອຟັງຕໍ່ອຳນາດການປົກຄອງຂອງພວກເຮົາແມ່ນເປັນສິ່ງສຳຄັນເພາະວ່າ:

1. **ພຣະເຈົ້າໃຊ້ຜູ້ມີອຳນາດປົກຄອງເພື່ອເສີມສ້າງພວກເຮົາ.** ເປັນທຶນທາງການກໍ່ສ້າງແລະບຳລຸງຮັກສາ, ນໍ້າສະອາດແລະນໍ້າເປື້ອນ, ຕຳລວດແລະໜ່ວຍບໍຣິການກູ້ພັຍສຸກເສີນ, ແລະການກຽມພ້ອມສຳລັບຜູ້ທຸກຍາກ, ຄົນປ່ວຍ, ແລະຜູ້ເຖົ້າແມ່ນມີພຽງແຕ່ສອງສາມວິທີທີ່ຜູ້ມີອຳນາດປົກຄອງຊ່ວຍພວກເຮົາ. ໜ້າທີ່ສູງສຸດຂອງຜູ້ມີອຳນາດປົກຄອງແມ່ນເບິ່ງແຍງປະເທດຊາດແລະສ້າງເງື່ອນໄຂຕ່າງໆທີ່ສນັບສນູນຄວາມຢູ່ດີກິນດີແລະຄວາມຈະເຣີນຮຸ່ງເຮືອງຂອງພົລເມືອງ.
2. **ພຣະເຈົ້າໃຊ້ຊີວິດຂອງພວກເຮົາເປັນພະຍານເຖິງຄວາມຮັກທີ່ສັດຊື່ຂອງພຣະອົງແລະພຣະຄຸນທີ່ບໍ່ເຫັນແກ່ຕົວ.** ໂລກກຳລັງເຝົ້າເບິ່ງວິທີທີ່ພວກເຮົາດຳເນີນຊີວິດ. "ພວກສາວົກໄດ້ຖືກເອີ້ນວ່າຄຣິສຕຽນຄັ້ງທຳອິດທີ່ເມືອງອັນຕິໂອເຊັຽ." (ກິຈການ 11:26). ໃນຂນະທີ່ຜູ້ທີ່ບໍ່ເຊື່ອໃຊ້ຊື່ນີ້ເວົ້າເຍາະເຍີ້ຍ, ມັນເບິ່ງຄືວ່າຜູ້ເຊື່ອເຫຼົ່ານີ້ເປັນຄົນທີ່ເປີດເຜີຍຊີວິດວ່າພວກເຂົາດຳເນີນຊີວິດຄືກັບຊາວຢິວ! ບາງຄົນອາດຈະບໍ່ເຄີຍອ່ານພຣະຄັມພີ, ສະນັ້ນພວກເຂົາທຸກຄົນຮູ້ກ່ຽວກັບຊື່ສຽງ. ເມື່ອພວກເຮົາດຳລົງຊີວິດໃນຖານະພົລເມືອງທີ່ດີໃນໂລກ, ຄົນທີ່ຮຽນຮູ້ເຖິງຄວາມຮັກທີ່ສັດຊື່ແລະພຣະຄຸນທີ່ບໍ່ເຫັນແກ່ຕົວຂອງພຣະເຈົ້າຜູ້ຊົງຣິດອຳນາດສູງສຸດທີ່ພວກເຮົາຮັກແລະຮັບໃຊ້.
3. **ພຣະເຈົ້າໃຊ້ຜູ້ມີອຳນາດປົກຄອງເພື່ອຈຸດປະສົງຂອງພຣະອົງ.** ພຣະເຈົ້າກຳລັງປະຕິບັດແຜນການການຊ່ວຍເຫຼືອຂອງພຣະອົງ. "ພຣະອົງໄດ້ຊົງສ້າງມະນຸດທຸກຊາດ ໃຫ້ເກີດມາຈາກມະນຸດຄົນດຽວ ແລະໃຫ້ເຂົາຢູ່ທົ່ວພິພົບໂລກ ພຣະອົງໄດ້ຊົງກຳນົດເວລາແລະກຳນົດເຂດທີ່ເຂົາຢູ່ນັ້ນ" (ກິຈການ 17:26). ບາງຄັ້ງພວກເຮົາສຸມໃຈໃສ່ແຕ່ຊີວິດຕົວເອງແລະຄວາມກັງວົນຂອງພວກເຮົາເຮັດໃຫ້ເຮົາລືມວ່າພຣະເຈົ້າກຳລັງທຳງານຢູ່ອ້ອມຮອບພວກເຮົາ- ແມ່ນແຕ່ພາຍໃນຜູ້ປົກຄອງ." ນໍ້າພຣະທັຍຂອງກະສັດເປັນເໝືອນແມ່ນໍ້າໃນພຣະຫັດຂອງພຣະຜູ້ເປັນເຈົ້າ ພຣະຜູ້ເປັນເຈົ້າຈະຫັນໄປທາງໃດໆກໍຕາມແຕ່ພຣະອົງຊົງໂຜດ." (ສຸພາສິດ 21:1).

## 3. ໂຣມ 13:8-10

8ຢ່າເປັນໜີ້ສິ່ງໃດແກ່ໃຜນອກຈາກຄວາມຮັກຊຶ່ງມີຕໍ່ກັນ ເພາະວ່າຜູ້ທີ່ຮັກເພື່ອນມະນຸດກໍປະຕິບັດຕາມພຣະບັນຍັດ-ຢ່າງຄົບຖ້ວນແລ້ວ. 9ເພາະວ່າຂໍ້ບັນຍັດທີ່ກ່າວວ່າ, "ຢ່າຫລິ້ນຊູ້, ຢ່າຂ້າຄົນ, ຢ່າລັກຊັບ, ຢ່າໂລບ" ທັງບັນຍັດຂໍ້ອື່ນໆກໍຮ່ວມຢູ່ໃນຂໍ້ນີ້ ຄື "ຈົ່ງຮັກເພື່ອນບ້ານເໝືອນຮັກຕົນເອງ." 10ຄວາມຮັກບໍ່ເຮັດອັນຕະລາຍແກ່ເພື່ອນບ້ານເຫດສັນນັ້ນຄວາມຮັກຈຶ່ງເປັນການປະຕິບັດຕາມຂໍ້ບັນຍັດຢ່າງຄົບຖ້ວນ.

ມັນອາດເບິ່ງຄືວ່າໂປໂລປ່ຽນຫົວເຣື່ອງໃນຂໍ້ 8 ຈາກການຕອບສນອງຂອງພວກເຮົາຕໍ່ອຳນາດການປົກຄອງໃນການຮັກຄົນອື່ນ, ແຕ່ພວກເຮົາຄວນອ່ານໃນຂໍ້ 8-10 ໃນແງ່ຂອງວິທີທີ່ພວກເຮົາຕອບສນອງຕໍ່ອຳນາດການປົກຄອງ. ທຸກໆວິທີທາງທີ່ເຮັດຈະໄດ້ຜົນດີຫຼາຍເກີນຄາດເມື່ອມັນຂັບເຄື່ອນໂດຍຄວາມຮັກ, ແລະບໍ່ມີໃຜທີ່ຈະເຮັດໃຫ້ຄວາມຮັກຜູກພັນກັນແໜ້ນໄດ້ດີກ່ວາຄຣິສຕຽນ.

ການເມືອງຕ້ອງປະຕິບັດໃນແງ່ມູມຂອງຄວາມຮັກ. ພວກເຮົາສ່ວນຫຼາຍແລ້ວບໍ່ແມ່ນນັກການເມືອງ, ແຕ່ພວກເຮົາມີຄວາມຄິດເຫັນທາງດ້ານການເມືອງ- ແລະພວກເຮົາຈຳເປັນຕ້ອງຝຶກຝົນແລະສະແດງທັດສະນະຄວາມຄິດເຫັນດ້ວຍຄວາມຮັກ. ອັຄສາວົກໂປໂລໄດ້ສັ່ງໃຫ້ຊາວໂຣມ- ແລະພວກເຮົາ- ບໍ່ຄວນເປັນໜີ້ທັງເລີຍນອກເໜືອຈາກໜີ້ຂອງການ

ຮັກຄົນອື່ນ: "ຢ່າເປັນໜີ້ສິ່ງໃດແກ່ໃຜນອກຈາກຄວາມຮັກຊຶ່ງມີຕໍ່ກັນ" (ຂໍ້ 8). ຄວາມຮັກເປັນຂໍ້ພິສູດໃຫ້ຮູ້ວ່າເຮົາແມ່ນໃຜ. ເມື່ອຄົນທັງຫຼາຍຮູ້ວ່າພວກເຮົາເປັນຄຣິສຕຽນ, ການປະພຶດປະຕິບັດແລະທັດສະນະຄວາມຄິດຂອງພວກເຮົາກໍ່ເຮັດໃຫ້ນາມຊື່ຂອງພຣະເຈົ້າຢູ່ໃນຄວາມສົນໃຈ. ຖ້າຄວາມຮັກບໍ່ໄດ້ຖືກສະແດງອອກໃນການສົນທະນາທາງດ້ານການເມືອງຂອງເຮົາ, ພວກເຮົາຈະເປັນຄົນ, ສາຍຕາສັ້ນ, ແລະເປັນຄົນເຫັນແກ່ຕົວ. ການເອີ້ນຊື່ແບບເຍາະເຍີ້ຍແລະການດູຖູກຢຽບຫຍາມບໍ່ໄດ້ເຮັດໃຫ້ສິ່ງໃດສິ່ງນຶ່ງເກີດຂຶ້ນໃນຊີວິດຂອງຜູ້ເຊື່ອ. ດັ່ງທີ່ພຣະເຢຊູໄດ້ກ່າວວ່າ, "ຖ້າເຈົ້າທັງຫຼາຍມີຄວາມຮັກເຊິ່ງກັນແລະກັນ ດັ່ງນີ້ແຫຼະ, ຄົນທັງປວງກໍຈະໄດ້ຮູ້ວ່າເຈົ້າທັງຫຼາຍເປັນສາວົກຂອງເຮົາ." (ໂຢຮັນ 13:35).

ການເມືອງທີ່ຖືກຂັບເຄື່ອນໄປດ້ວຍຄວາມຮັກແມ່ນຈະສແວງຫາເຮັດໃນສິ່ງທີ່ຖືກຕ້ອງຢູ່ສເມີ. "ຄວາມຮັກບໍ່ເຮັດສິ່ງທີ່ຜິດແກ່ເພື່ອນບ້ານ"(ຂໍ້ 10). ຄວາມຮັກແມ່ນສແວງຫາທີ່ຈະເຮັດສິ່ງທີ່ຖືກຕ້ອງດ້ວຍຄວາມຮັກຕໍ່ເພື່ອນບ້ານຂອງເຮົາ. ເມື່ອການຕອບສນອງຕໍ່ການເມືອງຂອງພວກເຮົາສະແດງຄວາມຮັກຕໍ່ພຣະເຈົ້າແລະຄົນອື່ນໆ, ພວກເຮົາຈະກາຍເປັນຄົນທີ່ຖ່ອມຕົວ, ຄະແນນສຽງການເລືອກຕັ້ງຂອງເຮົາກໍ່ຈະນຳພຣະກຽດມາໃຫ້ກັບພຣະເຈົ້າ. ພວກເຮົາເຮັດສິ່ງນີ້ເມື່ອເຮົາເອົາໃຈໃສທຸກສິ່ງທີ່ພຣະເຈົ້າສົນໃຈ.

ສິ່ງນີ້ມີຄວາມໝາຍວ່າໃນຖານະທີ່ເປັນຄຣິສຕຽນພວກເຮົາບໍ່ຄວນຖືເບົາຕໍ່ການເປັນພະຍານຂອງພວກເຮົາຕໍ່ແນວທາງການເມືອງ. ມັນເປັນສິ່ງທີ່ຖືກຕ້ອງທີ່ຈະສນັບສນູນນັກການເມືອງເມື່ອເຂົາສນັບບສນູນແຜນການຂອງພຣະເຈົ້າ, ແຕ່ໃນເວລາດຽວກັນພວກເຮົາຕ້ອງເຕັມໃຈທີ່ຈະຮຽກຮ້ອງນັກການເມືອງເຫຼົ່ານັ້ນເມື່ອພວກເຂົາທຳຜິດ, ພວກເຮົາຕ້ອງຮັບໃຊ້ພຣະເຈົ້າ.

## <u>ການນຳໃຊ້ໃນຊີວິດ.</u>

ເມື່ອເວົ້າເຖິງເຣື່ອງການເມືອງທ່ານຈະສະທ້ອນຄວາມຮັກຂອງພຣະຄຣິດໄດ້ແນວໃດ? ເລືອກຂໍ້ນຶ່ງໃນການນຳໃຊ້ຕໍ່ລົງໄປນີ້:

- **ຝຶກຄວາມຮັກ.** ພວກເຮົາສາມາດເຂົ້າໄປໃນລະດູການເລືກຕັ້ງ, ສະນັ້ນການເມືອງເປັນຫົວຂໍ້ທົ່ວໄປຂອງການສົນທະນາ. ບາງຄັ້ງບາງຄາວ, ຄຣິສຕຽນເຮົາອາດພົບຕົວເອງໃນທາງກົງກັນຂ້າມຂອງບັນຫາຫຼືການໂຕ້ວາທີກັບຜູ້ສະໝັກ. ຈົ່ງຮັກສາຄວາມຮັກຕໍ່ຄົນອື່ນໃນການສົນທະນາແລະການປາກເວົ້າຂອງທ່ານ.
- **ກະໂດດຫາພຣະຄຳຂອງພຣະເຈົ້າ.** ບັນຫາການເມືອງທີ່ພວກເຮົາປະເຊີນຢູ່ໃນປັດຈຸບັນນີ້ບໍ່ແມ່ນເຣື່ອງງ່າຍ. ສຶກສາຂໍ້ພຣະຄັມພີເບິ່ງເຖິງວິທີເວົ້າກັບປະເດັນຕ່າງໆ. ສືບຕໍ່ຊອກຫາຂໍ້ຄວາມທີ່ຈະສອດຄ່ອງກັບພຣະຄຳພຣະເຈົ້າ, ແລະເຮັດສິ່ງນັ້ນດ້ວຍຄວາມຮັກແລະຄວາມຖ່ອມຕົວ.
- **ເຂົ້າຮ່ວມ.** ທ່ານເປັນຜູ້ເຂົ້າຮ່ວມຢ່າງອອກໜ້າອອກຕາຫຼືວ່າທ່ານຮ້ອງທຸກຈາກຂ້າງນອກ? ມັນເປັນສິ່ງສຳຄັນສຳລັບຊາວຄຣິສຕຽນທີ່ຈະກ່າວປາສັຍໃນສະໜາມສາທາລະນະແລະຂະບວນການເມືອງ. ຈົ່ງໃຫ້ການເຄື່ອນໄຫວແລະປ່ອຍໃຫ້ຄວາມຮັກຂອງທ່ານຕໍ່ພຣະຄຣິດເປັນອິດທິພົນນັ້ນ.

ຈາກການທີ່ໃຊ້ເວລາຂອງຂ້າພະເຈົ້າຢູ່ໃນຄະນະໂຮງຮຽນຈົນເຖິງປັດຈຸບັນນີ້, ຂ້າພະເຈົ້າໄດ້ຮຽນບົດຮຽນຊີວິດທີ່ສຳຄັນອັນນຶ່ງຄື: ພວກເຮົາສາມາດບໍ່ຕົກລົງເຫັນດີກັນໂດຍປາສຈາກອາລົມຮ້າຍ. ບາງຄັ້ງພວກເຮົາອາດຈະພ່າຍແພ້, ແຕ່ຢ່າກັງວົນໃຈ. ພຣະເຈົ້າຊະນະໃນທີ່ສຸດ!

ອຸປຖັມໂດຍລາວຊາວເຫີນບັບຕິດສັມພັນ http://lsbf.us ແປໂດຍ VR.